ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ
ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ

ເລກທີ...0844...../ວກປຈ
ນະຄອນຫຼວງວຽງຈັນ, ວັນທີ...09 JUN 2023...

# ຫນັງສືແຈ້ງເຊີນປະມູນ

- ອີງຕາມ ແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2023 ສະບັບເລກທີ 0775/ກຜທ.ກຜ4, ລົງວັນທີ 31 ມີນາ 2023;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການມອບ ໂຄງການ ຟື້ນຟູກໍ່ສ້າງອາຄານຫໍພັກນັກສຶກສາ 2 ຊັ້ນ ໃຫ້ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດໂຄງການ ສະບັບເລກທີ 2444/ກປ, ລົງວັນທີ 10 ພຶດສະພາ 2023;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການລົງທຶນຂອງລັດ ໂຄງການ ຟື້ນຟູກໍ່ສ້າງອາຄານຫໍພັກນັກສຶກສາ 2 ຊັ້ນ ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ສະບັບເລກທີ 2732/ກປ, ລົງວັນທີ 31 ພຶດສະພາ 2023.

1. ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມເຂົ້າຍື່ນຊອງປະມູນ ສຳລັບການກໍ່ສ້າງ ໂຄງການ ຟື້ນຟູກໍ່ສ້າງອາຄານຫໍພັກນັກສຶກສາ 2 ຊັ້ນ ຂອງວິທະຍາໄລກະສິກ□າ ແລະ ປ່າໄມ້ ຈຳປາສັກ. ກຳນົດໄລຍະເວລາການກໍ່ສ້າງ 19 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ປະເພດຊັ້ນ 1 ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ໂດຍພົວພັນຫາ ທ່ານ ບຸນໂຮມ ໄຊສົງຄາມ ຫົວໜ້າຫ້ອງການບໍລິຫານ ແລະ ແຜນການ, ເບີໂທລະສັບ 0302813745, 020 5536 0445 ແລະ ຊື້ເອກະສານ-ປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນຫນັງສືສະເຫນີຫາ ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ (ໃນໂມງລັດຖະການ), ເລີ່ມແຕ່ 09 ມິຖຸນາ 2023 ເປັນຕົ້ນໄປ,



สแกนด้วย CamScanner

ໃນລາຄາ 2.000.000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.

6. ຊອງປະມູນຕ້ອງສົ່ງ, ໃນເວລາ ຫລື ກ່ອນເວລາ 10:00 ໂມງ, ວັນທີ 14 ກໍລະກົດ 2023 ທີ່ ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 10:30 ໂມງ, ວັນທີ 14 ກໍລະກົດ 2023 ທີ່ ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

7. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນອອກໂດຍທະນາຄານ ຊຶ່ງມູນຄ່າການຄ້ຳປະກັນ ບໍ່ໃຫ້ຫລຸດ 2 % ຂອງລາຄາສະເໜີເຂົ້າປະມູນ.

8. ທີ່ຢູ່: ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ.

- **ສະຖານທີ່ຊື້ເອກະສານປະມູນ:**
  1) ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ, ທ່ານ ບຸນໂຮມ ໄຊສົງຄາມ ເບີໂທລະສັບ 020 5536 0445.
  2) ກົມແຜນການ ແລະ ການຮ່ວມມື ກະຊວງກະສິກຳ ແລະ ປ່າໄມ້ ຕັ້ງຢູ່ ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ທ່ານ ພອນໄຊ ແກ້ວປະເສີດ ເບີໂທລະສັບ: 020 5445 6366.
- **ສະຖານທີ່ສົ່ງຊອງ ແລະ ບ່ອນເປີດຊອງປະມູນ:**
  1) ຫ້ອງການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ ຕັ້ງຢູ່ບ້ານກາງ, ນະຄອນປາກເຊ, ແຂວງຈຳປາສັກ.

**ອຳນວຍການວິທະຍາໄລກະສິກຳ ແລະ ປ່າໄມ້ ຈຳປາສັກ**
**ຫົວໜ້າຄະນະຮັບຜິດຊອບດຳເນີນການປະມູນຈັດຊື້-ຈັດຈ້າງ**

ວິທະຍາໄລ ກະສິກຳແລະປ່າໄມ້ ຈຳປາສັກ

**ຄຳສະຫວ່າງ ສີມບຸນຂັນ**



สแกนด้วย CamScanner